ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2143 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 28 ພະຈິກ 2016

# ຄຳສັ່ງແນະນຳ

ຮຽນ : ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ : ຂັ້ນຕອນການຢັ້ງຢືນຜະລິດຕະພັນໄມ້ຂັ້ນລົດ ເພື່ອສົ່ງອອກໄປຕ່າງປະເທດ.

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 552/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1355/ຫສນຍ.ກລຂ, ລົງວັນທີ 09 ທັນວາ 2016;
- ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016.
- ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1818/ຫສນຍ.ກສສ, ລົງວັນທີ 18 ພະຈິກ 2016

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງແນະນຳ ດັ່ງນີ້:

1) ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການປະສານສົມທົບກັບຂະແໜງການກ່ຽວຂ້ອງຂອງແຂວງ, ນະຄອນຫຼວງວຽງຈັນ ຈັດຕັ້ງເປັນຄະນະກຳມະການລົງໄປກວດກາຜະລິດຕະພັນໄມ້ ຕາມລາຍການ (ບັນຊີ) ຜະລິດຕະພັນໄມ້ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ເລກທີ 1833/ອຄ, ວັນທີ 03 ຕຸລາ 2016 ພ້ອມເຊັນໃສ່ໃບຢັ້ງຢືນຜະລິດຕະພັນໄມ້ຂັ້ນລົດເພື່ອສົ່ງອອກໄປຕ່າງປະເທດ ຕາມການສະເໜີຂອງບໍລິສັດ ຫຼື ໂຮງງານແຕ່ລະຄັ້ງ. ຫຼັງຈາກນັ້ນ, ມອບໃຫ້ຄະນະພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ເຊັນຮັບຮອງໃສ່ໃບຢັ້ງຢືນຜະລິດຕະພັນໄມ້ຂັ້ນລົດເພື່ອສົ່ງອອກ ແລະ ໃຫ້ຖືເອົາໃບຢັ້ງຢືນດັ່ງກ່າວພຽງຢ່າງດຽວ ເປັນເອກະສານປະກອບໃນການແຈ້ງພາສີສົ່ງຜະລິດຕະພັນໄມ້ອອກຕ່າງປະເທດ.

2) ສຳລັບໂຄງປະກອບຂອງຄະນະທີ່ລົງກວດກາໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:

2.1 ການສົ່ງອອກຜະລິດຕະພັນໄມ້ທີ່ມີແຫຼ່ງວັດຖຸດິບຈາກປ່າທຳມະຊາດ ປະກອບມີ ① ຂະແໜງອຸດສາຫະກຳ ແລະ ການຄ້າ, ② ຂະແໜງກະສິກຳ ແລະ ປ່າໄມ້ ③ ຂະແໜງການເງິນ ພາກສ່ວນລະ 01 ທ່ານ;

2.2 ການສົ່ງອອກຜະລິດຕະພັນໄມ້ສວນປູກ ປະກອບມີ: ① ຂະແໜງອຸດສາຫະກຳ ແລະ ການຄ້າ, ② ຂະແໜງກະສິກຳ ແລະ ປ່າໄມ້ ພາກສ່ວນລະ 01 ທ່ານ;

3) ຄະນະທີ່ຖືກແຕ່ງຕັ້ງໃຫ້ລົງກວດກາການຢັ້ງຢືນຜະລິດຕະພັນໄມ້ ໃຫ້ປະຕິບັດຕາມສິດ ແລະ ພາລະບົດບາດຂອງຕົນດັ່ງນີ້:

3.1 ຂະແໜງອຸດສາຫະກໍາ ແລະ ການຄ້າ (ອຸດສາຫະກໍາ ແລະ ຫັດຖະກໍາ) ຮັບຜິດຊອບກວດກາ:

- ຄວາມຖືກຕ້ອງໃບທະບຽນວິສາຫະກິດ, ໃບອະນຸຍາດດໍາເນີນກິດຈະການໂຮງງານ;
- ຢັ້ງຢືນຂະບວນການຜະລິດ ແລະ ຜະລິດຕະພັນໄມ້ ວ່າສອດຄ່ອງຕາມບັນຊີທີ່ອະນຸຍາດໃຫ້ສົ່ງອອກ;
- ເກັບກໍາຂໍ້ມູນສົ່ງອອກ (ຈໍານວນ, ປະເພດຜະລິດຕະພັນ, ຊະນິດໄມ້) ໂດຍສົມທຽບໃສ່ກັບສົ້ນເຂົ້າວັດຖຸດິບ;
- ສະຫຼຸບສັງລວມ ແລະ ລາຍງານຂໍ້ມູນການສົ່ງອອກຜະລິດຕະພັນໄມ້.

3.2 ຂະແໜງກະສິກໍາ ແລະ ປ່າໄມ້ (ປ່າໄມ້) ຮັບຜິດຊອບກວດກາ :

- ໃບອະນຸຍາດດໍາເນີນກິດຈະການກະສິກໍາ ແລະ ປ່າໄມ້;
- ໃບທະບຽນສວນປູກ (ກໍລະນີໄມ້ຈາກສວນປູກ);
- ກວດກາບັນດາເອກະສານຢັ້ງຢືນຄວາມຖືກຕ້ອງແຫຼ່ງທີ່ມາຂອງວັດຖຸດິບໄມ້ສົ້ນເຂົ້າ;
- ສົມທົບກັບຂະແໜງອຸດສາຫະກໍາ ແລະ ຫັດຖະກໍາ ກວດກາຜະລິດຕະພັນໄມ້ ຕາມບັນຊີໄມ້ທີ່ໄດ້ຮັບອະນຸຍາດສົ່ງອອກ;
- ກວດກາຊະນິດໄມ້, ຈໍານວນ, ບໍລິມາດ ຕາມແບບຟອມເກັບກໍາຂໍ້ມູນຜະລິດຕະພັນໄມ້ທີ່ອະນຸຍາດໃຫ້ສົ່ງອອກ.

3.3 ຫ້ອງການຄຸ້ມຄອງຊັບສິນຂອງລັດ ຮັບຜິດຊອບກວດກາ:

- ໜີບກົ່ວສໍາລັບໂຮງງານທີ່ບໍ່ໄດ້ຮັບການຢັ້ງຢືນມາດຕະຖານໂຮງງານຈາກກົມອຸດສາຫະກໍາ ແລະ ຫັດຖະກໍາ;
- ຈົດທະບຽນສັນຍາຊື້-ຂາຍ;
- ກວດກາຄືນການເສຍພັນທະອາກອນ ເຊັ່ນ : ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ, ອາກອນຊຸດຄົ້ນ, ອາກອນຊື້-ຂາຍ, ອາກອນຂົນສົ່ງ ແລະ ອາກອນກໍາໄລ.

4) ຄໍາສັ່ງແນະນໍາສະບັບນີ້ ນໍາໃຊ້ປ່ຽນແທນ ແລະ ລົບລ້າງຄໍາສັ່ງແນະນໍາ ເລກທີ 1153/ອຄ.ກຂອ, ລົງວັນທີ 30 ມິຖຸນາ 2016.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຄໍາສັ່ງແນະນໍານີ້ ຢ່າງເຂັ້ມງວດ໌

ລັດຖະມົນຕີ,

ກະຊວງອຸດສາຫະກໍາ ແລະ ການຄ້າ

ບ ເຂັມມະນີ ພົນເສນາ

**ບ່ອນນໍາສົ່ງ:**

| | |
|---|---|
| - ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ | ເພື່ອຊາບ |
| - ອົງການກວດກາລັດຖະບານ | ເພື່ອຊາບ |
| - ກະຊວງການເງິນ | ເພື່ອຊາບ |
| - ກະຊວງກະສິກໍາ ແລະ ປ່າໄມ້ | ເພື່ອຊາບ |
| - ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງວຽງຈັນ | ເພື່ອຊາບ |
| - ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ | ເພື່ອຊາບ |